

## ບົດຄຳເຫັນ ຂອງ ທ່ານ ປອ. ບຸນຈັນ ສິນທະວົງ
## ລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ
## ໃນໂອກາດ ວັນເຄຫາສະຖານໂລກ 2020

ບັນດາທ່ານທີ່ຮັກແພງທັງຫລາຍ ນັບຕັ້ງແຕ່ປີ 1986 ເປັນຕົ້ນມາ ໃນເດືອນຕຸລາ ຂອງທຸກປີ ໄດ້ກາຍເປັນ ເດືອນ ທີ່ບັນດາປະຊາຊາດຢູ່ໃນໂລກ ຈະມາຮ່ວມກັນ ສະເຫລີມສະຫລອງ ວັນເຄຫະສະຖານໂລກ ຊຶ່ງເປົ້າໝາຍຫລັກແມ່ນ ເພື່ອເປັນການຍົກລະດັບຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງປວງຊົນ ຕໍ່ກັບການພັດທະນາທີ່ຢູ່ອາໄສ ແລະ ການພັດທະນາຕົວເມືອງທີ່ຍືນຍົງ ພ້ອມນີ້ກໍເພື່ອເປັນການປຸກລະດົມກຳລັງຄວາມສາມາດ ທາງດ້ານການເມືອງ ແລະ ນະໂຍບາຍ ໃນການແກ້ໄຂບັນຫາເຮືອນຢູ່. ການສະເຫລີມສະຫລອງໃນ ປີ 2020 ນີ້ ແມ່ນພາຍໃຕ້ຄຳຂວັນທີ່ວ່າ ***ເຮືອນຢູ່ສຳລັບທຸກຄົນ: ອານາຄົດຂອງຕົວເມືອງທີ່ດີກວ່າ.*** ການກຳນົດເອົາຫົວຂໍ້ນີ້ ແມ່ນອີງຕາມການລາຍງານ ຂອງ ອົງການສະຫະປະຊາຊາດ ທີ່ໄດ້ຊີ້ໃຫ້ເຫັນວ່າ ໃນປັດຈຸບັນນີ້ ພົນລະເມືອງຂອງຕົວເມືອງ ຢູ່ໃນໂລກ ຫລາຍກວ່າ 20% ຫລື ປະມານ 1,8 ຕື້ຄົນ ຍັງຂາດທີ່ຢູ່ອາໄສທີ່ໝັ້ນຄົງຖາວອນ ຊຶ່ງໃນນັ້ນ 1 ຕື້ຄົນ ແມ່ນອາໄສ ຢູ່ໃນຄຸ້ມທີ່ແອອັດ ຫລື ສະລຳ ແລະ ຫລາຍກວ່າ 100 ລ້ານຄົນ ແມ່ນບຸກຄົນທີ່ບໍ່ມີເຮືອນຢູ່ (homeless), ນອກຈາກນີ້ ຈາກການຄາດຄະເນ ໃນປີ 2030 ຈຳນວນຕົວເລກຜູ້ທີ່ຂາດທີ່ຢູ່ອາໄສຈະເພີ່ມຂຶ້ນຕື່ມອີກເປັນ 3ຕື້ກວ່າຄົນ. ຕໍ່ສະຖານະການດັ່ງກ່າວ ຈຶ່ງມີຄວາມຈຳເປັນຢ່າງຍິ່ງທີ່ພວກເຮົາຄວນຈະເພີ່ມທະວີຄວາມເອົາໃຈໃສ່ ຕໍ່ຄວາມສຳຄັນຂອງການມີເຮືອນຢູ່ທີ່ໝັ້ນຄົງຖາວອນ ຊຶ່ງແມ່ນໜຶ່ງໃນປັດໄຈ ຄວາມຈຳເປັນພື້ນຖານຂອງມວນມະນຸດ ຄຽງຄູ່ກັບປັດໃຈພື້ນຖານອື່ນເຊັ່ນວ່າ: ອາຫານ, ເຄື່ອງນຸ່ງຫົ່ມ, ການສຶກສາ, ສຸຂະອານາໄມ ແລະ ການປິ່ນປົວສຸຂະພາບ.

ສຳລັບ ສປປ ລາວ ຂອງພວກເຮົາ ເຖິງວ່າຈະຖືກຈັດເປັນ ປະເທດທີ່ຍັງມີລາຍໄດ້ຕໍ່າປານກາງ ແຕ່ພວກເຮົາກໍເປັນໜຶ່ງໃນບັນດາປະເທດ ທີ່ຖືໄດ້ວ່າ ບໍ່ມີຜູ້ຄົນທີ່ຂາດທີ່ຢູ່ອາໄສ ແລະ ບໍ່ມີຄຸ້ມແອອັດ ຫລື ສະລຳ ທີ່ຢູ່ໃນເງື່ອນໄຂ ສະພາບແວດລ້ອມຊຸດໂຊມ ດັ່ງທີ່ພົບເຫັນໃນຂົງເຂດອື່ນຂອງພາກພື້ນ ແລະ ໃນໂລກ ໂດຍສະເພາະແມ່ນປະເທດກຳລັງພັດທະນາ. ຜົນຂອງການສຳຫລວດພົນລະເມືອງແລະທີ່ຢູ່ອາໄສທົ່ວປະເທດ ໃນປີ 2015 ໄດ້ຊີ້ໃຫ້ເຫັນວ່າ ພົນລະເມືອງລາວປະມານ 86% ແມ່ນມີເຮືອນຢູ່ ເປັນຂອງຕົນເອງ ແລະ ສ່ວນທີ່ເຫລືອແມ່ນ ອາໄສຢູ່ເຮືອນເຊົ່າ (10,5%) ແລະ ເຮືອນທີ່ເປັນກຳມະສິດ ຂອງ ຍາດພີ່ນ້ອງ. ເຖິງແນວໃດກໍ່ຕາມ ຍ້ອນການຂະຫຍາຍຕົວຂອງຕົວເມືອງທີ່ວ່ອງໄວ ແລະ ການພັດທະນາທີ່ຢູ່ອາໃສທີ່ຍັງບໍ່ມີຄວາມຍືນຍົງໃນໄລຍະທີ່ຜ່ານມາ, ປະຊາຊົນລາວ ທີ່ອາໄສຢູ່ເຂດນອກຕົວເມືອງ ແມ່ນນັບມື້ມີຄວາມເພິ່ງພໍໃຈທີ່ຫຼຸດລົງ ຕໍ່ສະພາບທີ່ຢູ່ອາໄສຂອງຕົນ ຊຶ່ງເລີ່ມແຕກຕ່າງຈາກເມື່ອກ່ອນ ທີ່ຍັງມີເຂດພື້ນທີ່ອ້ອມ

ຮອບເຮືອນທີ່ກວ້າງຂວາງ, ມີສະພາບແວດລ້ອມທຳມະຊາດປອດໂປ່ງ ແລະ ທັດສະນີຍະພາບທີ່ສວຍງາມ , ໃນຂະນະທີ່ປະຊາຊົນທີ່ອາໄສໃນເຂດຕົວເມືອງແມ່ນມີທ່າອ່ຽງທີ່ຈະປະເຊີນກັບລາຄາທີ່ຢູ່ອາໄສ ທີ່ນັບມື້ນັບແພງຂຶ້ນ ແລະ ມີຂະໜາດທີ່ນັບມື້ນັບແຄບລົງ.

ເຖິງວ່າຈະຍັງບໍ່ທັນມີຂໍ້ມູນຊັດເຈນ ຈາກການສຶກສາ ຄົ້ນຄ້ວາສະເພາະ, ແຕ່ຄົງຈະປະຕິເສດບໍ່ໄດ້ວ່າ ບັນຫາການຂະຫຍາຍຂອງຕົວເມືອງທີ່ແຜ່ລາມໂດຍບໍ່ມີການຄວບຄຸມຢ່າງຮອບດ້ານ ຢູ່ໃນບັນດາຕົວເມືອງໃຫຍ່ ຂອງປະເທດໃນປັດຈຸບັນ ແມ່ນມີຕົ້ນເຫດມາຈາກ ການນຳໃຊ້ທີ່ດິນ ແລະ ການພັດທະນາທີ່ຢູ່ອາໄສທີ່ຍັງບໍ່ສອດຄ່ອງກັບຂໍ້ກຳນົດ ແລະ ກົດລະບຽບ ຂອງແຜນຜັງຕົວເມືອງ ທີ່ໄດ້ວາງອອກ. ພ້ອມນັ້ນ, ພວກເຮົາກໍອາດຈະສາມາດເວົ້າໄດ້ວ່າ ບັນຫາການຈະລາຈອນແອອັດ ໃນໄລຍະເລັ່ງດ່ວນ, ການເກີດນ້ຳຂັງ ແລະ ນ້ຳຖ້ວມຢູ່ໃນ ຕົວເມືອງ ລວມເຖິງຄວາມຕ້ອງການໃຫ້ມີງົບປະມານມະຫາສານ ເພື່ອກໍ່ສ້າງ ໂຄ່ງລ່າງພື້ນຖານ ສະໜອງໃຫ້ແກ່ຊຸມຊົນ ເປັນຕົ້ນແມ່ນຖະໜົນ ຫົນທາງ, ລະບົບນ້ຳປະປາ, ລະບົບລະບາຍນ້ຳເປື້ອນ, ການສະໜອງພະລັງງານ ແລະ ອື່ນໆ ທີ່ຍັງບໍ່ພຽງພໍ ແລະ ບໍ່ເຕັມສະມັດຕະພາບ ຂອງຄຸນຄ່າການໃຊ້ຊັບພະຍາກອນ ແມ່ນອາດຈະສາມາດແກ້ໄຂໃຫ້ມີຜົນກະທົບທາງລົບທີ່ໜ້ອຍລົງໄດ້ ຖ້າມີ ການວາງແຜນ ແລະການຈັດຕັ້ງປະຕິບັດໂຄງການ ການພັດທະນາທີ່ຢູ່ອາໄສ ແລະເຮືອນຢູ່ ທີ່ສາມາດຕອບສະໜອງກັບ ຄວາມຕ້ອງການ ຂອງທຸກກຸ່ມຄົນ (ເຮືອນຢູ່ໄດ້ມາດຕະຖານ ລາຄາເໝາະສົມ ປະຊາຊົນທົ່ວໄປສາມາດຊື້ໄດ້).

ນອກນັ້ນ, ເມື່ອສັງເກດຈາກ ຕົວເລກຈຳນວນຫລັງຄາເຮືອນ ທີ່ຖືກກໍ່ສ້າງຢູ່ໃນຕົວເມືອງ ໃນແຕ່ລະປີ ພວກເຮົາສາມາດສັງເກດເຫັນເຖິງ ທ່າແຮງ ແລະ ຄວາມອາດສາມາດທາງດ້ານການເງິນຂອງຂະແໜງກໍ່ສ້າງ ຕໍ່ການແກ້ໄຂບັນຫາຂອງຕົວເມືອງ ໃນລະດັບທ້ອງຖິ່ນ ແລະ ລະດັບຊາດ. ສິ່ງທ້າທາຍຕົ້ນຕໍ ທີ່ຈະເປັນຂໍກະແຈ ໃຫ້ພວກເຮົາໄຂເຂົ້າໄປນຳໃຊ້ທ່າແຮ່ງດັ່ງກ່າວນັ້ນ ແມ່ນຄວາມສາມາດໃນການຊອກຫາມາດຕະການ ແລະ ແນວທາງດຳເນີນການ ເພື່ອຫັນໃຫ້ຂະບວນການກໍ່ສ້າງ ແບບກຸ້ມຕົນເອງພໍໃຜພໍມັນມາເປັນແບບທີ່ມີການຈັດຕັ້ງ ແລະ ເປັນລະບົບຕາມກົດໝາຍ.

ຍ້ອນເຫດຜົນທີ່ກ່າວມານັ້ນ ແລະ ເນື່ອງໃນໂອກາດວັນເຄຫະສະຖານໂລກ ທີ່ໝູນວຽນມາອີກຄັ້ງໃນປີ 2020 ນີ້, ຊື່ງທົ່ວໂລກ ກຳລັງສຸມໃສ່ການສ້າງທີ່ຢູ່ອາໄສທີ່ໝັ້ນຄົງ, ປອດໄພ ແລະ ທົ່ວເຖິງ, ຂ້າພະເຈົ້າຈື່ງ ຂໍຮຽກຮ້ອງມາຍັງ ອົງການຈັດຕັ້ງລັດ, ຜູ້ລົງທຶນເອກະຊົນ ແລະ ປະຊາຊົນທົ່ວໄປ ໃຫ້ທັນມາຮ່ວມມືກັນ ຊອກວິທີທາງ ແລະ ກົນໄກ ສ້າງໂຄງການສ້າງເຮືອນຢູ່ ໃນຮູບແບບຕ່າງໆ ເປັນຕົ້ນແມ່ນການຮ່ວມມືແບບຫລາຍພາກສ່ວນ ຫຼືເອີ້ນວ່າ PPP ເພື່ອເຮັດໃຫ້ຂະແໜງການເສດຖະກິດດ້ານນີ້ ສາມາດປະກອບສ່ວນຢ່າງເຕັມສ່ວນ ເຂົ້າໃນການສ້າງວຽກເຮັດງານທຳ, ການສ້າງບຸກຄະລາກອນວິຊາຊີບ ແລະ ການສ້າງຕົວເມືອງໃຫ້ມີ ຄຸນນະພາບສະພາບແວດລ້ອມທີ່ດີ ແລະ ໜ້າຢູ່.

ຂອບໃຈ.